# BEMPEDIS

**Generic name**: Bempedoic acid
**Brand name:** BEMPEDIS
**Composition:**
Bempedoic acid........................................180 mg
**Indications:**
- BEMPEDIS is an adenosine triphosphate-citrate lyase (ACL) inhibitor indicated as an adjunct to diet and maximally tolerated statin therapy for the treatment of adults with heterozygous familial hypercholesterolemia or established atherosclerotic cardiovascular disease who require additional lowering of LDL-C.
- Limitations of Use: The effect of BEMPEDIS on cardiovascular morbidity and mortality has not been determined.

**Dosage:**
- Administer 180 mg orally once daily with or without food.

**Contraindications:**
- None.

**Warning:**
- Hyperuricemia: Elevations in serum uric acid have occurred. Assess uric acid levels periodically as clinically indicated. Monitor for signs and symptoms of hyperuricemia, and initiate treatment with urate-lowering drugs as appropriate.
- Tendon Rupture: Tendon rupture has occurred. Discontinue BEMPEDIS at the first sign of tendon rupture. Avoid BEMPEDIS in patients who have a history of tendon disorders or tendon rupture.

**Adverse Effects:**
- Most common (incidence ≥ 2% and greater than placebo) adverse reactions are upper respiratory tract infection, muscle spasms, hyperuricemia, back pain, abdominal pain or discomfort, bronchitis, pain in extremity, anemia, and elevated liver enzymes.

**Dosage form:** White tablet.
**Expiry date:** 36 months from the date of manufacture
**Packaging:** 30 tablets per bottle.
**Storage:**
- Store at 20°C to 25°C; excursions permitted to 15°C to 30°C.
- Store and dispense in the original package protected from extreme heat and humidity. Do not discard desiccant.

**Manufactured by:**
Laos Alliance Pharmaceutical Group Factory
Saysettha Development Zone, Vientiane Capital, Lao PDR
Tel: +856-21-737 051
www.alliancepharmagroup.com

# ເອກະສານກຳກັບຢາ
# BEMPEDIS

**ຊື່ທົ່ວໄປ:** Bempedoic acid
**ຊື່ການຄ້າ:** BEMPEDIS
**ສ່ວນປະກອບ**:
Bempedoic acid........................................................180 mg
**ຂໍ້ບົ່ງໃຊ້:**
- BEMPEDIS ຖືກນຳໃຊ້ເປັນຢາຫຼຸດໄຂມັນໃນເລືອດໃນຜູ້ໃຫຍ່ ທີ່ພົບໂຄນເລັດສເຕໂລນ ມີປະລິມານສູງໃນເລືອດ (Hypercholesterolemia), ສະພາບໄຂມັນສູງໃນກະແສເລືອດ ສາມາດນຳໄປສູ່ການເກີດໄຂມັນເກາະຕິດຕາມເສັ້ນເລືອດພາໃຫ້ເກີດ ເສັ້ນເລືອດແຂງ ແລະ ເກີດພະຍາດຫົວໃຈ-ເສັ້ນເລືອດຕາມມາ, ກົນໄກໃນການອອກລິດຂອງຢາແມ່ນ ຕ້ານການທຳງານຂອງອັງຊິມ Adenosine triphosphate-citrate lyase (ACL) ທີ່ມີຜົນຕໍ່ລະດັບຂອງໄຂມັນໃນເລືອດ, ໃນການປິ່ນປົວຈະໃຊ້ຮ່ວມກັບ ວິທີການຄວບຄຸມອາຫານການກິນ ທີ່ສາມາດເຮັດໃຫ້ລະດັບໄຂມັນບໍ່ດີ ຫຼື LDL-C ຫຼຸດລົງ.
- ຂໍ້ຈຳກັດໃນການໃຊ້: ການໃຊ້ຄວນໄດ້ຮັບການຕິດຕາມ ແລະ ການແນະນຳຈາກແພດຢ່າງເຄັ່ງຄັດ, ເນື່ອງຈາກຢານີ້ຍັງບໍ່ໄດ້ສຶກສາຜົນຂອງມັນຕໍ່ກັບ ອັດຕາການໃຊ້ ແລະ ອັດຕາການຕາຍ ຈາກບັນຫາຫົວໃຈ-ເສັ້ນເລືອດ.

**ວິທີໃຊ້:**
- ນຳໃຊ້ດ້ວຍການໃຫ້ກິນ ໃນປະລິມານ 180 mg ວັນລະຄັ້ງ, ສາມາດ ກິນໃນເວລາທ້ອງວ່າງ ຫຼື ຫຼັງອາຫານໄດ້.

**ຂໍ້ຫ້າມໃຊ້:**
- ຍັງບໍ່ທັນມີຂໍ້ມູນລາຍງານ ໃນປະຈຸບັນ.

**ຄຳເຕືອນ:**
- ພາວະການເກີດກົດຢູລິກສູງໃນເລືອດ (Hyperuricemia): ໃນໄລຍະການໃຊ້ຢາ ຄວນມີການກວດຕິດຕາມລະດັບກົດຢູລິກໃນເລືອດ, ຕິດຕາມອາການທາງຄຣີນິກຂອງຜູ້ໃຊ້ຢາ ຖ້າພົບເຫັນອາການທີ່ສຳພັນກັບກົດຢູລິກສູງໃນເລືອດ ຄວນໄດ້ຮັບການປິ່ນປົວຕາມອາການທັນທີ ແລະ ໃຫ້ການປິ່ນປົວດ້ວຍຢາ ທີ່ມີການອອກລິດໃນການຫຼຸດປະລິມານເກືອ Urate ຕາມຄວາມເໝາະສົມ.
- ບັນຫາກ່ຽວກັບເສັ້ນເອັນ (Tendon Rupture): ໃນໄລຍະການໃຊ້ຢາ ຄວນກວດເຊັກຮ່າງກາຍ ເພື່ອເບິ່ງບັນຫາກ່ຽວກັບເສັ້ນເອັນ ຂໍ້ຕໍ່ຕ່າງໆ ຖ້າພົບເຫັນອາການ ຄວນຢຸດໃຊ້ຢາ ຫຼື ໃນຄົນເຈັບທີ່ມີບັນຫາ ກ່ຽວກັບເສັ້ນເອັນ ມາກ່ອນ ກໍບໍ່ຄວນໃຊ້ຢານີ້.

**ຜົນຂ້າງຄຽງ:**
- ຜົນຂ້າງຄຽງທີ່ພົບສ່ວນໃຫຍ່ແມ່ນ ພົບການຕິດເຊື້ອໃນລະບົບທາງເດີນຫາຍໃຈດ້ານເທິງ, ອາການປັ້ນເຈັບປວດຕາມກ້າມເນື້ອ, ກົດຢູລິກສູງໃນເລືອດ, ປວດຫຼັງ, ປວດທ້ອງ ຢູ່ບໍ່ສະບາຍ, ຫຼອດລົມອັກເສບ, ປວດຕາມແຂນຂາ, ເລືອດຈາງ, ພົບອັງຊີມກ່ຽວກັບການທຳງານຂອງຕັບເພີ່ມຂຶ້ນ.

**ຮູບແບບຂອງຢາ**: ເປັນຢາເມັດສີຂາວ.
**ວັນໝົດອາຍຸ**: 36 ເດືອນ ນັບຫຼັງຈາກວັນທີ່ຜະລິດ.
**ຂະໜາດບັນຈຸ:** ບັນຈຸໃນກ່ອງ, 1 ກ່ອງມີ 30 ເມັດ.
**ການເກັບຮັກສາ:**
- ເກັບຮັກສາໃນອຸນຫະພູມລະຫວ່າງ 20°C ຫາ 25°C; ຂອບເຂດອຸນຫະພູມສູງສຸດທີ່ອະນຸຍາດໃນການເກັບຮັກສາ 15°C ຫາ 30°C.
- ເກັບຮັກສາໃນກັບກ່ອງທີ່ບັນຈຸເດີມ, ເກັບຮັກສາໃນຫ້ອງ ບໍ່ໃຫ້ຖືກແສງສະຫວ່າງ ບໍ່ໃຫ້ກະທົບຄວາມຮ້ອນ ແລະ ຄວາມຊຸ່ມສູງ, ຫ້າມຖິ້ມສານດູດຄວາມຊື້ນ.

**ຜະລິດໂດຍ:**
ໂຮງງານຜະລິດຢາ ລາວພັນທະມິດ ຟາກມາ ກຣຸບ ຈຳກັດ
ສະຖານທີ່: ຕັ້ງຢູ່ເຂດ ພັດທະນາກວມລວມ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856-21-737 051
www.alliancepharmagroup.com